ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ທະນາຄານແຫ່ງ ສປປ ລາວ ເລກທີ 115 /ທຫລ

ນະຄອນຫຼວງວຽງຈັນ, ວັນທີ 07 ກຸມພາ 2025

# ຂໍ້ຕົກລົງ
# ວ່າດ້ວຍການຄຸ້ມຄອງວຽກງານຂໍ້ມູນຂ່າວສານສິນເຊື່ອ

- ອີງຕາມ ດຳລັດວ່າດ້ວຍວຽກງານຂໍ້ມູນຂ່າວສານສິນເຊື່ອ ສະບັບເລກທີ 224/ລບ, ລົງວັນທີ 19 ກໍລະກົດ 2019;
- ອີງຕາມ ການຄົ້ນຄວ້າຂອງກົມຄຸ້ມຄອງທະນາຄານທຸລະກິດ ໂດຍປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງ.

**ຜູ້ວ່າການ ຕົກລົງ:**

## ໝວດທີ 1
## ບົດບັນຍັດທົ່ວໄປ

### ມາດຕາ 1 ຈຸດປະສົງ

ຂໍ້ຕົກລົງສະບັບນີ້ ກຳນົດຫຼັກການ, ລະບຽບການ ແລະ ມາດຕະການ ກ່ຽວກັບການຄຸ້ມຄອງ ແລະ ການເຄື່ອນໄຫວ ວຽກງານຂໍ້ມູນຂ່າວສານສິນເຊື່ອ ເພື່ອເຮັດໃຫ້ການເກັບກຳ, ການສ້າງ ແລະ ການນຳໃຊ້ ຜະລິດຕະພັນຂໍ້ມູນຂ່າວສານສິນເຊື່ອ ຄົບຖ້ວນ ແລະ ຖືກຕ້ອງ ແນໃສ່ເຮັດໃຫ້ການບໍລິຫານຄວາມສ່ຽງທາງດ້ານສິນເຊື່ອ ຂອງສະຖາບັນການເງິນ ແລະ ພາກສ່ວນທີ່ກ່ຽວຂ້ອງ ມີປະສິດທິພາບ ປະກອບສ່ວນເຂົ້າໃນການຮັກສາສະຖຽນລະພາບທາງດ້ານການເງິນ-ເງິນຕາ.

### ມາດຕາ 2 ການຄຸ້ມຄອງວຽກງານຂໍ້ມູນຂ່າວສານສິນເຊື່ອ

ການຄຸ້ມຄອງວຽກງານຂໍ້ມູນຂ່າວສານສິນເຊື່ອ ແມ່ນການຈັດຕັ້ງປະຕິບັດບັນດາຫຼັກການ, ລະບຽບການ ແລະ ມາດຕະການ ກ່ຽວກັບ ການເກັບກຳ, ການຮັກສາ, ການແກ້ໄຂ ຂໍ້ມູນຂ່າວສານສິນເຊື່ອ ລວມທັງການສ້າງ ແລະ ການສະໜອງ ຜະລິດຕະພັນຂໍ້ມູນຂ່າວສານສິນເຊື່ອ ຕາມທີ່ໄດ້ກຳນົດໄວ້ໃນດຳລັດວ່າດ້ວຍວຽກງານຂໍ້ມູນຂ່າວສານສິນເຊື່ອ ແລະ ຂໍ້ຕົກລົງສະບັບນີ້.

### ມາດຕາ 3 ຂອບເຂດການນຳໃຊ້

ຂໍ້ຕົກລົງສະບັບນີ້ ນຳໃຊ້ສຳລັບ ສະມາຊິກ, ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທີ່ເຄື່ອນໄຫວກ່ຽວຂ້ອງກັບວຽກງານຂໍ້ມູນຂ່າວສານສິນເຊື່ອ.

## ໝວດທີ 2
## ການເຄື່ອນໄຫວວຽກງານຂໍ້ມູນຂ່າວສານສິນເຊື່ອ

**ມາດຕາ 4 ການເກັບກຳຂໍ້ມູນ**

ການເກັບກຳຂໍ້ມູນ ໃຫ້ປະຕິບັດ ດັ່ງນີ້:

1. ສະມາຊິກ ຕ້ອງເກັບກຳ, ຢັ້ງຢືນແຫຼ່ງທີ່ມາ ແລະ ສັງລວມ ຂໍ້ມູນຂ່າວສານສິນເຊື່ອຂອງລູກຄ້າ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 8 ຂອງດຳລັດວ່າດ້ວຍວຽກງານຂໍ້ມູນຂ່າວສານສິນເຊື່ອ ລວມທັງ ຂໍ້ມູນອື່ນ ຕາມແບບພິມລາຍງານຂອງບໍລິສັດຂໍ້ມູນຂ່າວສານສິນເຊື່ອແຫ່ງ ສປປ ລາວ ໃຫ້ຖືກຕ້ອງ ແລະ ຄົບຖ້ວນ;

2. ບໍລິສັດຂໍ້ມູນຂ່າວສານສິນເຊື່ອແຫ່ງ ສປປ ລາວ ເປັນເຈົ້າການເກັບກຳຂໍ້ມູນຂ່າວສານສິນເຊື່ອ ຈາກສະມາຊິກຕາມແບບພິມລາຍງານທີ່ຕົນກຳນົດ ແລະ ເກັບກຳຂໍ້ມູນນຳພາກສ່ວນທີ່ກ່ຽວຂ້ອງ ຕາມການ ຕົກລົງເຫັນດີຮ່ວມກັນ.

**ມາດຕາ 5 ການລາຍງານຂໍ້ມູນ**

ສະມາຊິກ ຕ້ອງລາຍງານຂໍ້ມູນຂ່າວສານສິນເຊື່ອທີ່ຕົນໄດ້ເກັບກຳ ໃຫ້ບໍລິສັດຂໍ້ມູນຂ່າວສານສິນເຊື່ອ ແຫ່ງ ສປປ ລາວ ດັ່ງນີ້:

1. ຂໍ້ມູນຂ່າວສານສິນເຊື່ອ ທີ່ໄດ້ກຳນົດໄວ້ໃນມາດຕາ 8 ຂໍ້ 1, 2, 3 ແລະ 4 ຂອງດຳລັດວ່າດ້ວຍ ວຽກງານຂໍ້ມູນຂ່າວສານສິນເຊື່ອ: ລາຍງານຜ່ານລະບົບຂໍ້ມູນຂ່າວສານສິນເຊື່ອ ຢ່າງໜ້ອຍເດືອນລະຄັ້ງ. ກໍລະນີ ມີການປັບປຸງຂໍ້ມູນຂ່າວສານສິນເຊື່ອບ້ວງເກົ່າ ຫຼື ການອະນຸມັດສິນເຊື່ອບ້ວງໃໝ່ ຕ້ອງລາຍງານທຸກຄັ້ງ;

2. ຂໍ້ມູນຂ່າວສານສິນເຊື່ອຂອງຕົນ ແລະ ລູກຄ້າ ທີ່ໄດ້ກຳນົດໄວ້ໃນມາດຕາ 8 ຂໍ້ 5 ຂອງດຳລັດວ່າ ດ້ວຍວຽກງານຂໍ້ມູນຂ່າວສານສິນເຊື່ອ: ລາຍງານຜ່ານລະບົບຂໍ້ມູນຂ່າວສານສິນເຊື່ອ ປີລະຄັ້ງ ຊ້າສຸດ ວັນທີ 15 ເດືອນ ເມສາ ຂອງປີຖັດໄປ;

3. ຂໍ້ມູນຖານະເງິນກູ້ຂອງລູກຄ້າ: ລາຍງານໃນຮູບແບບເອເລັກໂຕຣນິກ (Soft file) ເປັນປະຈຳເດືອນ, ຫົກເດືອນ ແລະ ປີ ຊ້າສຸດ ວັນທີ 15 ຂອງເດືອນຖັດໄປ;

4. ຂໍ້ມູນທີ່ຕິດພັນກັບ ຂໍ້ມູນທີ່ໄດ້ກຳນົດໄວ້ໃນມາດຕາ 8 ຂອງດຳລັດວ່າດ້ວຍວຽກງານຂໍ້ມູນຂ່າວ ສານສິນເຊື່ອ ເປັນຕົ້ນ ລະຫັດສະມາຊິກ, ລະຫັດລູກຄ້າ, ລະຫັດສາຂາ, ລະຫັດເງິນກູ້, ລະຫັດຫຼັກຊັບຄ້ຳປະກັນ: ລາຍງານການປ່ຽນແປງທຸກຄັ້ງ ຢ່າງເປັນລາຍລັກອັກສອນ ເພື່ອໃຫ້ບໍລິສັດຂໍ້ມູນຂ່າວສານສິນເຊື່ອແຫ່ງ ສປປ ລາວ ດຳເນີນການແກ້ໄຂ ກ່ອນການນຳສົ່ງຂໍ້ມູນໃນຄັ້ງຖັດໄປ;

5. ຂໍ້ມູນຂ່າວສານສິນເຊື່ອ ທີ່ໄດ້ປິດການເຄື່ອນໄຫວ: ສືບຕໍ່ລາຍງານ ໄປອີກໜຶ່ງປີ ນັບແຕ່ວັນປິດ ການເຄື່ອນໄຫວ ເປັນຕົ້ນໄປ.

**ມາດຕາ 6 ການກວດກາ ແລະ ເກັບຮັກສາຂໍ້ມູນຂ່າວສານສິນເຊື່ອ**

ບໍລິສັດຂໍ້ມູນຂ່າວສານສິນເຊື່ອແຫ່ງ ສປປ ລາວ ຕ້ອງກວດກາ ແລະ ກັ່ນຕອງ ຂໍ້ມູນຂ່າວສານສິນ ເຊື່ອ ທີ່ໄດ້ຮັບຈາກສະມາຊິກ ເພື່ອຮັບປະກັນຄວາມຖືກຕ້ອງຂອງຂໍ້ມູນ. ໃນກໍລະນີພົບເຫັນຂໍ້ມູນທີ່ບໍ່ຖືກຕ້ອງ, ບໍລິສັດຂໍ້ມູນຂ່າວສານສິນເຊື່ອແຫ່ງ ສປປ ລາວ ຕ້ອງແຈ້ງໃຫ້ສະມາຊິກຢ່າງເປັນລາຍລັກອັກສອນ ຫຼື ຜ່ານຊ່ອງ ທາງການສື່ສານໃດໜຶ່ງ ເພື່ອແກ້ໄຂໃຫ້ຖືກຕ້ອງ ພາຍໃນ ຫ້າ ວັນລັດຖະການ ກ່ອນນຳສົ່ງເຂົ້າລະບົບຂໍ້ມູນຂ່າວ ສານສິນເຊື່ອ.

ບໍລິສັດຂໍ້ມູນຂ່າວສານສິນເຊື່ອແຫ່ງ ສປປ ລາວ ແລະ ສະມາຊິກ ຕ້ອງເກັບຮັກສາຂໍ້ມູນຂ່າວສານສິນ ເຊື່ອ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 8 ຂອງດຳລັດວ່າດ້ວຍວຽກງານຂໍ້ມູນຂ່າວສານສິນເຊື່ອ.

**ມາດຕາ 7 ການຮັກສາຄວາມປອດໄພຂອງຂໍ້ມູນຂ່າວສານສິນເຊື່ອ**

ບໍລິສັດຂໍ້ມູນຂ່າວສານສິນເຊື່ອແຫ່ງ ສປປ ລາວ ແລະ ສະມາຊິກ ຕ້ອງຮັບປະກັນທາງດ້ານເຕັກນິກ ແລະ ການຈັດການ ລະບົບຂໍ້ມູນຂ່າວສານສິນເຊື່ອ ເພື່ອຮັກສາຄວາມປອດໄພ ແລະ ໃຫ້ສາມາດກູ້ຄືນຂໍ້ມູນຂ່າວສານສິນເຊື່ອ ທີ່ສູນເສຍໃນແຕ່ລະກໍລະນີ ເປັນຕົ້ນ ໄພພິບັດທາງທຳມະຊາດ, ອັກຄີໄພ, ການໂຈມຕີລະບົບຄອມພິວເຕີ ຫຼື ໄພອັນຕະລາຍອື່ນ.

**ມາດຕາ 8 ການນຳໃຊ້ຂໍ້ມູນຂ່າວສານສິນເຊື່ອ**

ການນຳໃຊ້ຂໍ້ມູນຂ່າວສານສິນເຊື່ອ ໃຫ້ປະຕິບັດ ດັ່ງນີ້:

1. ບໍລິສັດຂໍ້ມູນຂ່າວສານສິນເຊື່ອແຫ່ງ ສປປ ລາວ ນຳໃຊ້ເຂົ້າໃນການສ້າງຜະລິດຕະພັນຂໍ້ມູນຂ່າວສານສິນເຊື່ອ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 12 ຂອງດຳລັດວ່າດ້ວຍວຽກງານຂໍ້ມູນຂ່າວສານສິນເຊື່ອ. ກຳນົດເວລາຂອງຂໍ້ມູນຂ່າວສານສິນເຊື່ອທີ່ນຳໃຊ້ເຂົ້າໃນການສ້າງຜະລິດຕະພັນຂໍ້ມູນຂ່າວສານສິນເຊື່ອ ໃຫ້ປະຕິບັດຕາມການກຳນົດຂອງບໍລິສັດຂໍ້ມູນຂ່າວສານສິນເຊື່ອແຫ່ງ ສປປ ລາວ ໃນແຕ່ລະໄລຍະ;

2. ສະມາຊິກ ນຳໃຊ້ຜະລິດຕະພັນຂໍ້ມູນຂ່າວສານສິນເຊື່ອ ເຂົ້າໃນການຄົ້ນຄວ້າພິຈາລະນາອະນຸມັດສິນເຊື່ອໃຫ້ຜູ້ກູ້ຢືມລາຍໃໝ່, ອະນຸມັດສິນເຊື່ອບ້ວງໃໝ່ໃຫ້ລູກຄ້າລາຍເກົ່າ, ຕໍ່ສັນຍາສິນເຊື່ອ, ປັບປຸງໂຄງສ້າງໜີ້ ແລະ ການເຄື່ອນໄຫວວຽກງານອື່ນ ທີ່ກ່ຽວຂ້ອງກັບການບໍລິຫານຄວາມສ່ຽງສິນເຊື່ອ;

3. ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ນຳໃຊ້ຂໍ້ມູນຂ່າວສານສິນເຊື່ອຂອງຕົນ ເຂົ້າໃນການກວດກາຄວາມຖືກຕ້ອງຂອງຂໍ້ມູນຂ່າວສານສິນເຊື່ອຂອງຕົນ ແລະ ນຳໃຊ້ເຂົ້າໃນຈຸດປະສົງອື່ນ ຕາມການແນະນຳຂອງບໍລິສັດຂໍ້ມູນຂ່າວສານສິນເຊື່ອແຫ່ງ ສປປ ລາວ, ກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ;

4. ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ນຳໃຊ້ຂໍ້ມູນຂ່າວສານສິນເຊື່ອ ຂອງບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງອື່ນ ໂດຍໄດ້ຮັບການຍິນຍອມຈາກເຈົ້າຂອງຂໍ້ມູນ ຢ່າງເປັນລາຍລັກອັກສອນ. ເວັ້ນເສຍແຕ່ການ ນຳໃຊ້ຂໍ້ມູນເຂົ້າໃນການເຄື່ອນໄຫວວຽກງານ ຂອງທະນາຄານແຫ່ງ ສປປ ລາວ, ອົງການກວດກາ ຫຼື ອົງການອື່ນ ທີ່ມີສິດຕາມກົດໝາຍ.

**ມາດຕາ 9 ການສ້າງຜະລິດຕະພັນຂໍ້ມູນຂ່າວສານສິນເຊື່ອ**

ບໍລິສັດຂໍ້ມູນຂ່າວສານສິນເຊື່ອແຫ່ງ ສປປ ລາວ ສັງລວມ, ວິເຄາະຂໍ້ມູນ, ອອກແບບລະບົບ ແລະ ຖານຂໍ້ມູນ ເພື່ອສ້າງເປັນຜະລິດຕະພັນຂໍ້ມູນຂ່າວສານສິນເຊື່ອ ດັ່ງນີ້:

1. ບົດລາຍງານຂໍ້ມູນສິນເຊື່ອ ຊຶ່ງປະກອບດ້ວຍ ຂໍ້ມູນທົ່ວໄປຂອງລູກຄ້າ ທີ່ເປັນບຸກຄົນ ແລະ ນິຕິບຸກຄົນ ເປັນຕົ້ນ ປະຫວັດການກູ້ຢືມ, ຫຼັກຊັບຄໍ້າປະກັນ ເພື່ອຊ່ວຍໃຫ້ສະມາຊິກ ວິເຄາະຄວາມສ່ຽງຂັ້ນພື້ນຖານໃນການສະໜອງສິນເຊື່ອ;

2. ບົດລາຍງານຄະແນນສິນເຊື່ອ ຊຶ່ງເປັນຂໍ້ມູນທີ່ສະແດງໃຫ້ເຫັນການຈັດລຳດັບຄະແນນສິນເຊື່ອຂອງບຸກຄົນ ແລະ ນິຕິບຸກຄົນ ໂດຍຜ່ານມາດຕະຖານການປະເມີນຄວາມໜ້າເຊື່ອຖືທາງດ້ານການເງິນຂອງລູກຄ້າ ເພື່ອຊ່ວຍໃນການຕັດສິນໃຈສະໜອງສິນເຊື່ອໃຫ້ແກ່ລູກຄ້າ;

3. ບົດລາຍງານກວດກາ, ຕິດຕາມຂໍ້ມູນສິນເຊື່ອ ຊຶ່ງສະແດງໃຫ້ເຫັນຂໍ້ມູນການຊຳລະ ແລະ ຄວາມຄືບໜ້າໃນການຊຳລະໜີ້ ເພື່ອຊ່ວຍຫຼຸດຜ່ອນຄວາມສ່ຽງທາງດ້ານສິນເຊື່ອ ແລະ ການລົງທຶນ;

4. ບົດລາຍງານສະເພາະດ້ານໃນການວິເຄາະຕະຫຼາດ ຊຶ່ງປະກອບດ້ວຍ ສະຖິຕິຂອງການສະໜອງສິນເຊື່ອ ເປັນຕົ້ນ ຜະລິດຕະພັນສິນເຊື່ອ, ກຸ່ມລູກຄ້າ, ເປົ້າໝາຍການສະໜອງສິນເຊື່ອ ເພື່ອຊ່ວຍໃຫ້ສະມາຊິກໃນການຕັດສິນໃຈຂະຫຍາຍໜ່ວຍບໍລິການ ຫຼື ສາຂາ ຂອງຕົນ;

5. ບົດລາຍງານການລົ້ມລະລາຍ ແມ່ນເອກະສານທາງດ້ານການເງິນ ທີ່ສະແດງໃຫ້ເຫັນເຖິງການລາຍງານສະພາບການດຳເນີນທຸລະກິດ ແລະ ສາເຫດຂອງການລົ້ມລະລາຍ ຢ່າງເປັນທາງການ ໂດຍການພິຈາລະນາຕັດສິນຂອງສານ;

6. ບົດລາຍງານແຈ້ງເຕືອນລ່ວງໜ້າ ຊຶ່ງສະແດງໃຫ້ເຫັນເຖິງສະພາບການເຄື່ອນໄຫວຂອງລູກຄ້າໃນການຂໍ ແລະ ການອະນຸມັດສິນເຊື່ອ ນຳສະມາຊິກ ເພື່ອຊ່ວຍໃຫ້ສະມາຊິກກຽມພ້ອມໃນການບໍລິຫານຄວາມສ່ຽງສິນເຊື່ອ ທີ່ອາດຈະເກີດຂຶ້ນໃນອະນາຄົດ;

7. ບົດລາຍງານຂໍ້ມູນສາທາລະນຸປະໂພກ ຊຶ່ງປະກອບດ້ວຍ ຂໍ້ມູນທົ່ວໄປຂອງລູກຄ້າ, ປະຫວັດການຊຳລະຄ່າສາທາລະນຸປະໂພກ ເປັນຕົ້ນ ຄ່າໄຟຟ້າ, ຄ່ານ້ຳປະປາ, ຄ່າໂທລະຄົມມະນາຄົມ ຊຶ່ງສະແດງໃຫ້ເຫັນເຖິງພຶດຕິກຳການຊຳລະຄ່າສາທາລະນຸປະໂພກ ຂອງບຸກຄົນ ແລະ ນິຕິບຸກຄົນ ເພື່ອສະແດງໃຫ້ເຫັນເຖິງວິໄນທາງດ້ານການເງິນຂອງລູກຄ້າ;

8. ບົດລາຍງານອື່ນ ຕາມການກຳນົດຂອງບໍລິສັດຂໍ້ມູນຂ່າວສານສິນເຊື່ອແຫ່ງ ສປປ ລາວ ແລະ ທະນາຄານແຫ່ງ ສປປ ລາວ ໃນແຕ່ລະໄລຍະ.

### ມາດຕາ 10 ການສະໜອງຜະລິດຕະພັນຂໍ້ມູນຂ່າວສານສິນເຊື່ອ

ບໍລິສັດຂໍ້ມູນຂ່າວສານສິນເຊື່ອແຫ່ງ ສປປ ລາວ ສາມາດສະໜອງຜະລິດຕະພັນຂໍ້ມູນຂ່າວສານສິນເຊື່ອດ້ວຍ ສອງ ຮູບການ ດັ່ງນີ້:

1.ສະໜອງໃຫ້ສະມາຊິກ ທີ່ຕ້ອງການນຳໃຊ້ຜະລິດຕະພັນຂໍ້ມູນຂ່າວສານສິນເຊື່ອ ໂດຍຜ່ານລະບົບຂໍ້ມູນຂ່າວສານສິນເຊື່ອ;

2. ສະໜອງໃຫ້ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທີ່ຕ້ອງການນຳໃຊ້ຜະລິດຕະພັນຂໍ້ມູນຂ່າວສານສິນເຊື່ອ ຕາມການສະເໜີ ໂດຍສອດຄ່ອງກັບລະບຽບການພາຍໃນຂອງຕົນ.

### ມາດຕາ 11 ການພັດທະນາ ແລະ ປັບປຸງລະບົບເຕັກໂນໂລຊີ

ສະມາຊິກ ຕ້ອງພັດທະນາ ແລະ ປັບປຸງ ລະບົບເຕັກໂນໂລຊີ ເພື່ອໃຫ້ລະບົບຂໍ້ມູນຂ່າວສານສິນເຊື່ອຂອງຕົນ ສາມາດຮອງຮັບຂໍ້ມູນແບບພິມລາຍງານຂອງບໍລິສັດຂໍ້ມູນຂ່າວສານສິນເຊື່ອແຫ່ງ ສປປ ລາວ.

ໃນກໍລະນີສະມາຊິກ ມີແຜນການພັດທະນາ ຫຼື ປັບປຸງ ລະບົບເຕັກໂນໂລຊີ ທີ່ສົ່ງຜົນເຮັດໃຫ້ຂໍ້ມູນຂ່າວສານສິນເຊື່ອ ແລະ ຂໍ້ມູນທີ່ຕິດພັນ ມີການປ່ຽນແປງ ສະມາຊິກຕ້ອງແຈ້ງແຜນພັດທະນາ ຫຼື ປັບປຸງດັ່ງກ່າວ ໃຫ້ບໍລິສັດຂໍ້ມູນຂ່າວສານສິນເຊື່ອແຫ່ງ ສປປ ລາວ ຢ່າງເປັນລາຍລັກອັກສອນ ເພື່ອໃຫ້ບໍລິສັດດັ່ງກ່າວປັບປຸງຂໍ້ມູນໃຫ້ສອດຄ່ອງກັນ ກ່ອນການລາຍງານຄັ້ງຕໍ່ໄປ.

## ໝວດທີ 3
## ບໍລິສັດຂໍ້ມູນຂ່າວສານສິນເຊື່ອແຫ່ງ ສປປ ລາວ

### ມາດຕາ 12 ທີ່ຕັ້ງ ແລະ ພາລະບົດບາດ

ບໍລິສັດຂໍ້ມູນຂ່າວສານສິນເຊື່ອແຫ່ງ ສປປ ລາວ ແມ່ນວິສາຫະກິດໜຶ່ງ ທີ່ຖືກສ້າງຕັ້ງຂຶ້ນຕາມດຳລັດວ່າດ້ວຍວຽກງານຂໍ້ມູນຂ່າວສານສິນເຊື່ອ ແລະ ລະບຽບການທີ່ກ່ຽວຂ້ອງ ຊຶ່ງຢູ່ພາຍໃຕ້ການຄຸ້ມຄອງຂອງທະນາຄານແຫ່ງ ສປປ ລາວ.

ບໍລິສັດຂໍ້ມູນຂ່າວສານສິນເຊື່ອແຫ່ງ ສປປ ລາວ ມີພາລະບົດບາດເປັນສູນກາງຂໍ້ມູນຂ່າວສານສິນເຊື່ອທັງໝົດ ໃນທົ່ວຂະແໜງການເງິນ-ເງິນຕາ ແລະ ສະໜອງຜະລິດຕະພັນຂໍ້ມູນຂ່າວສານສິນເຊື່ອໃຫ້ແກ່

ສະມາຊິກ, ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ແນ່ໃສ່ ປ້ອງກັນ ແລະ ຈຳກັດ ຄວາມສ່ຽງດ້ານສິນເຊື່ອ, ສົ່ງເສີມການເຂົ້າເຖິງແຫຼ່ງທຶນແບບຍືນຍົງ ປະກອບສ່ວນຮັກສາສະຖຽນລະພາບດ້ານການເງິນ-ເງິນຕາ.

**ມາດຕາ 13 ສິດ ແລະ ໜ້າທີ່**

ບໍລິສັດຂໍ້ມູນຂ່າວສານສິນເຊື່ອແຫ່ງ ສປປ ລາວ ມີ ສິດ ແລະ ໜ້າທີ່ ດັ່ງນີ້:

1. ສ້າງ ແລະ ປັບປຸງ ນະໂຍບາຍທີ່ຕິດພັນກັບການຄຸ້ມຄອງວຽກງານຂໍ້ມູນຂ່າວສານສິນເຊື່ອ, ແຜນທຸລະກິດ ແລະ ແຜນພັດທະນາລະບົບຂໍ້ມູນຂ່າວສານສິນເຊື່ອ;
2. ຄົ້ນຄວ້າພັດທະນາຜະລິດຕະພັນຂໍ້ມູນຂ່າວສານສິນເຊື່ອ ເພື່ອຕອບສະໜອງຄວາມຕ້ອງການຂອງສະມາຊິກ, ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ;
3. ສ້າງ ແລະ ປັບປຸງ ກົງຈັກຊ່ວຍວຽກ ແລະ ປະກອບບຸກຄະລາກອນ ທີ່ເໝາະສົມ ເພື່ອຮັບໃຊ້ວຽກງານຂອງຕົນ;
4. ສ້າງ, ປັບປຸງ ນິຕິກຳ ແລະ ຄູ່ມື ທີ່ຕິດພັນກັບວຽກງານຂໍ້ມູນຂ່າວສານສິນເຊື່ອ ຕາມຂອບເຂດສິດຂອງຕົນ;
5. ພັດທະນາ, ບຳລຸງຮັກສາ ແລະ ຄຸ້ມຄອງ ລະບົບຂໍ້ມູນຂ່າວສານສິນເຊື່ອ ໃຫ້ມີຄວາມທັນສະໄໝ, ປອດໄພ, ໝັ້ນຄົງ, ມີຄຸນນະພາບ ແລະ ຄວາມໜ້າເຊື່ອຖື;
6. ຕິດຕາມ ກວດກາ ການຈັດຕັ້ງປະຕິບັດວຽກງານຂໍ້ມູນຂ່າວສານສິນເຊື່ອ ຂອງສະມາຊິກ;
7. ຮຽກເອົາຂໍ້ມູນຂ່າວສານສິນເຊື່ອຈາກສະມາຊິກ;
8. ກຳນົດຄ່າ ເຂົ້າເປັນສະມາຊິກ, ເຂົ້າຄົ້ນຫາຂໍ້ມູນ ແລະ ບຳລຸງຮັກສາລະບົບ ແລະ ຄ່າບໍລິການອື່ນ ທີ່ກ່ຽວຂ້ອງກັບການສະໜອງຂໍ້ມູນຂ່າວສານສິນເຊື່ອ;
9. ກຳນົດແບບພິມລາຍງານຂໍ້ມູນຂ່າວສານສິນເຊື່ອ ໃຫ້ສະມາຊິກ ແລະ ຜູ້ກ່ຽວຂ້ອງ ຈັດຕັ້ງປະຕິບັດ;
10. ອອກ ແລະ ຖອນ ໃບອະນຸຍາດການເຂົ້າເປັນສະມາຊິກ ລວມທັງໂຈະການເປັນສະມາຊິກ ຕາມລະບຽບການທີ່ກ່ຽວຂ້ອງ;
11. ນຳໃຊ້ມາດຕະການຕໍ່ສະມາຊິກ ທີ່ລະເມີດລະບຽບການກ່ຽວກັບວຽກງານຂໍ້ມູນຂ່າວສານສິນເຊື່ອ;
12. ປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງ ໃນການຈັດຕັ້ງປະຕິບັດວຽກງານຂໍ້ມູນຂ່າວສານສິນເຊື່ອ ພ້ອມທັງສະເໜີປະຕິບັດມາດຕະການຕໍ່ຜູ້ລະເມີດ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ;
13. ສ້າງກົນໄກ ແລະ ຊ່ອງທາງ ເພື່ອອຳນວຍຄວາມສະດວກ ໃຫ້ບັນດາກົມ ແລະ ທຽບເທົ່າກົມຂອງທະນາຄານແຫ່ງ ສປປ ລາວ ໃນການເຄື່ອນໄຫວ ແລະ ຄຸ້ມຄອງວຽກງານຂໍ້ມູນຂ່າວສານສິນເຊື່ອ ຢ່າງທັນສະພາບການ;
14. ຝຶກອົບຮົມວຽກງານຂໍ້ມູນຂ່າວສານສິນເຊື່ອໃຫ້ສະມາຊິກ ເປັນຕົ້ນ ການເກັບກຳ, ການກວດກາ, ການລາຍງານ ແລະ ການເຂົ້າຄົ້ນຫາ ຜະລິດຕະພັນຂໍ້ມູນຂ່າວສານສິນເຊື່ອ;
15. ລາຍງານການເຄື່ອນໄຫວວຽກງານຂໍ້ມູນຂ່າວສິນເຊື່ອ, ເອກະສານລາຍງານການເງິນ ແລະ ຂໍ້ມູນອື່ນ ໃຫ້ກົມຄຸ້ມຄອງທະນາຄານທຸລະກິດ ໃນແຕ່ລະໄລຍະ;
16. ເຂົ້າຮ່ວມກອງປະຊຸມ, ຝຶກອົບຮົມ, ສຳມະນາ, ທັດສະນະສຶກສາ, ປະກອບຄຳເຫັນ ແລະ ແລກປ່ຽນບົດຮຽນ ກັບພາກສ່ວນຕ່າງໆ ທັງພາຍໃນ ແລະ ຕ່າງປະເທດ ເພື່ອພັດທະນາວຽກງານຂໍ້ມູນຂ່າວສານສິນເຊື່ອ;
17. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມລະບຽບການທີ່ກ່ຽວຂ້ອງ.

# ໝວດທີ 4
# ຄວາມຮັບຜິດຊອບ ຂອງສະມາຊິກ ແລະ ເຈົ້າຂອງຂໍ້ມູນ

## ມາດຕາ 14 ຄວາມຮັບຜິດຊອບຂອງສະມາຊິກ

ສະມາຊິກ ມີຄວາມຮັບຜິດຊອບ ດັ່ງນີ້:

1. ເກັບກຳ, ລາຍງານຂໍ້ມູນ ແລະ ຮັບຜິດຊອບ ຕໍ່ຄວາມຖືກຕ້ອງ, ຄົບຖ້ວນ ແລະ ທັນເວລາ ຕາມທີ່ໄດ້ກຳນົດໄວ້ໃນຂໍ້ຕົກລົງສະບັບນີ້;

2. ສະໜອງຂໍ້ມູນອື່ນ ນອກຈາກທີ່ໄດ້ກຳນົດໄວ້ໃນແບບພິມລາຍງານຂອງບໍລິສັດຂໍ້ມູນຂ່າວສານສິນເຊື່ອແຫ່ງ ສປປ ລາວ ຕາມການຮຽກຂອງບໍລິສັດດັ່ງກ່າວ ໃຫ້ຄົບຖ້ວນ ແລະ ທັນເວລາ;

3. ກວດກາ, ປັບປຸງ ແລະ ແກ້ໄຂ ຂໍ້ມູນທີ່ບໍ່ຖືກຕ້ອງ ຕາມການແຈ້ງເຕືອນໃນລະບົບຂໍ້ມູນຂ່າວສານສິນເຊື່ອ ແລະ ຕາມການແຈ້ງຂອງບໍລິສັດຂໍ້ມູນຂ່າວສານສິນເຊື່ອແຫ່ງ ສປປ ລາວ ໃຫ້ທັນເວລາ;

4. ພັດທະນາ ແລະ ປັບປຸງ ລະບົບເຕັກໂນໂລຊີ ໃຫ້ສາມາດຕອບສະໜອງວຽກງານຂໍ້ມູນຂ່າວສານສິນເຊື່ອ ຕາມການແນະນຳຂອງບໍລິສັດຂໍ້ມູນຂ່າວສານສິນເຊື່ອແຫ່ງ ສປປ ລາວ, ກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ;

5. ສ້າງ ແລະ ປັບປຸງ ລະບຽບການພາຍໃນຂອງຕົນ ເພື່ອຈັດຕັ້ງປະຕິບັດວຽກງານຂໍ້ມູນຂ່າວສານສິນເຊື່ອ;

6. ນຳໃຊ້ຜະລິດຕະພັນຂໍ້ມູນຂ່າວສານສິນເຊື່ອ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 8 ຂໍ້ 2 ຂອງຂໍ້ຕົກລົງສະບັບນີ້;

7. ປະກອບຜົນການຄົ້ນຫາຂໍ້ມູນຂ່າວສານສິນເຊື່ອເຂົ້າໃນສຳນວນສິນເຊື່ອ ທຸກຄັ້ງທີ່ມີການອະນຸມັດສິນເຊື່ອໃຫ້ຜູ້ກູ້ຢືມລາຍໃໝ່, ການອະນຸມັດສິນເຊື່ອບ້ວງໃໝ່ໃຫ້ຜູ້ກູ້ຢືມລາຍເກົ່າ, ຕໍ່ສັນຍາສິນເຊື່ອ ແລະ ປັບປຸງໂຄງສ້າງໜີ້;

8. ຈັດຕັ້ງໜ່ວຍງານ ຫຼື ແຕ່ງຕັ້ງພະນັກງານຮັບຜິດຊອບວຽກງານຂໍ້ມູນຂ່າວສານສິນເຊື່ອ;

9. ເຂົ້າຮ່ວມກອງປະຊຸມ, ຝຶກອົບຮົມ, ສຳມະນາ ກ່ຽວກັບການເຄື່ອນໄຫວວຽກງານຂໍ້ມູນຂ່າວສານສິນເຊື່ອ;

10.ຊຳລະຄ່າ ເຂົ້າເປັນສະມາຊິກ, ເຂົ້າຄົ້ນຫາຂໍ້ມູນ ແລະ ບຳລຸງຮັກສາລະບົບ ແລະ ຄ່າບໍລິການອື່ນທີ່ຕິດພັນກັບການເຄື່ອນໄຫວວຽກງານຂໍ້ມູນຂ່າວສານສິນເຊື່ອ ຕາມລະບຽບການຂອງບໍລິສັດຂໍ້ມູນຂ່າວສານສິນເຊື່ອແຫ່ງ ສປປ ລາວ;

11.ຕິດຕາມ ກວດກາ ການນຳໃຊ້ຊື່ ແລະ ລະຫັດຜ່ານ ຂອງພະນັກງານ ທີ່ບໍລິສັດຂໍ້ມູນຂ່າວສານສິນເຊື່ອແຫ່ງ ສປປ ລາວ ອະນຸຍາດນຳໃຊ້ ເພື່ອບໍ່ໃຫ້ພະນັກງານດັ່ງກ່າວ ມອບຊື່ ແລະ ລະຫັດຜ່ານ ໃຫ້ບຸກຄົນອື່ນ;

12. ໃຫ້ຄວາມຮ່ວມມື ໃນການປະຕິບັດໜ້າທີ່ຂອງອົງການຄຸ້ມຄອງວຽກງານຂໍ້ມູນຂ່າວສານສິນເຊື່ອ;

13. ມີຄວາມຮັບຜິດຊອບອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ລະບຽບການ.

## ມາດຕາ 15 ຄວາມຮັບຜິດຊອບຂອງເຈົ້າຂອງຂໍ້ມູນ

ເຈົ້າຂອງຂໍ້ມູນ ມີຄວາມຮັບຜິດຊອບ ດັ່ງນີ້:

1. ສະເໜີຂໍ ແລະ ນຳໃຊ້ ຂໍ້ມູນຂ່າວສານສິນເຊື່ອ ຕາມທີ່ໄດ້ກຳນົດໄວ້ໃນຂໍ້ຕົກລົງສະບັບນີ້;

2. ສະເໜີບໍລິສັດຂໍ້ມູນຂ່າວສານສິນເຊື່ອແຫ່ງ ສປປ ລາວ ເພື່ອແຈ້ງສະມາຊິກໃຫ້ປັບປຸງ ແລະ ແກ້ໄຂຂໍ້ມູນຂ່າວສານສິນເຊື່ອຂອງຕົນ ໃນກໍລະນີເຫັນວ່າຂໍ້ມູນດັ່ງກ່າວ ບໍ່ຖືກຕ້ອງ ຫຼື ບໍ່ຄົບຖ້ວນ ໂດຍມີຫຼັກຖານຢັ້ງຢືນ ຢ່າງຖືກຕ້ອງ;

3. ສະໜອງຂໍ້ມູນຂ່າວສານສິນເຊື່ອຂອງຕົນ ໃຫ້ສະມາຊິກ ຢ່າງຖືກຕ້ອງ ແລະ ຄົບຖ້ວນ;

4. ຍິນຍອມໃຫ້ສະມາຊິກ ເກັບກຳ, ນຳໃຊ້ ແລະ ລາຍງານ ຂໍ້ມູນຂ່າວສານສິນເຊື່ອຂອງຕົນ ໃຫ້ບໍລິສັດຂໍ້ມູນຂ່າວສານສິນເຊື່ອແຫ່ງ ສປປ ລາວ ຕາມກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ;

5. ຍິນຍອມໃຫ້ບໍລິສັດຂໍ້ມູນຂ່າວສານສິນເຊື່ອແຫ່ງ ສປປ ລາວ ເກັບກຳ, ນຳໃຊ້ ແລະ ເປີດເຜີຍຂໍ້ມູນຂ່າວສານສິນເຊື່ອຂອງຕົນ ຕາມກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ;

6. ຍິນຍອມໃຫ້ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງອື່ນ ຮັບຮູ້ຂໍ້ມູນຂ່າວສານສິນເຊື່ອຂອງຕົນ ຕາມກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ;

7. ຊຳລະຄ່າບໍລິການ ໃນການນຳໃຊ້ຜະລິດຕະພັນຂໍ້ມູນຂ່າວສານສິນເຊື່ອ ຕາມລະບຽບການຂອງບໍລິສັດຂໍ້ມູນຂ່າວສານສິນເຊື່ອແຫ່ງ ສປປ ລາວ;

8. ມີຄວາມຮັບຜິດຊອບອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ລະບຽບການ.

## ໝວດທີ 5
## ສິດ ແລະ ໜ້າທີ່ ຂອງພາກສ່ວນທີ່ກ່ຽວຂ້ອງ

### ມາດຕາ 16 ສິດ ແລະ ໜ້າທີ່ ຂອງກົມຄຸ້ມຄອງທະນາຄານທຸລະກິດ

ໃນການຄຸ້ມຄອງວຽກງານຂໍ້ມູນຂ່າວສານສິນເຊື່ອ ກົມຄຸ້ມຄອງທະນາຄານທຸລະກິດ ມີສິດ ແລະ ໜ້າທີ່ ດັ່ງນີ້:

1. ສ້າງ ແລະ ປັບປຸງ ແຜນຍຸດທະສາດ ແລະ ນະໂຍບາຍ ທີ່ຕິດພັນກັບການຄຸ້ມຄອງວຽກງານຂໍ້ມູນຂ່າວສານສິນເຊື່ອ ເພື່ອສະເໜີຂັ້ນເທິງພິຈາລະນາ;

2. ສ້າງ, ປັບປຸງ ແລະ ເຜີຍແຜ່ ນິຕິກຳ, ຄູ່ມື, ແບບພິມລາຍງານ ກ່ຽວກັບການຄຸ້ມຄອງວຽກງານຂໍ້ມູນຂ່າວສານສິນເຊື່ອ;

3. ຄຸ້ມຄອງ, ຕິດຕາມ, ກວດກາ ແລະ ຊຸກຍູ້ ການເຄື່ອນໄຫວວຽກຂອງບໍລິສັດຂໍ້ມູນຂ່າວສານສິນເຊື່ອແຫ່ງ ສປປ ລາວ ແລະ ທະນາຄານທຸລະກິດ;

4. ປະຕິບັດມາດຕະການຕໍ່ບໍລິສັດຂໍ້ມູນຂ່າວສານສິນເຊື່ອແຫ່ງ ສປປ ລາວ ທີ່ລະເມີດກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ;

5. ປະສານສົມທົບກັບບໍລິສັດຂໍ້ມູນຂ່າວສານສິນເຊື່ອແຫ່ງ ສປປ ລາວ ໃນການເຂົ້າເຖິງ, ແລກປ່ຽນ ແລະ ນຳໃຊ້ ຂໍ້ມູນຂ່າວສານສິນເຊື່ອ ທີ່ຕິດພັນກັບການຄຸ້ມຄອງວຽກງານຂໍ້ມູນຂ່າວສານສິນເຊື່ອ ເຂົ້າໃນການຄຸ້ມຄອງຄວາມໝັ້ນຄົງ ຂອງທະນາຄານທຸລະກິດ;

6. ແຈ້ງບໍລິສັດຂໍ້ມູນຂ່າວສານສິນເຊື່ອແຫ່ງ ສປປ ລາວ ໃນການຄົ້ນຄວ້ານຳໃຊ້ມາດຕະການຕໍ່ທະນາຄານທຸລະກິດ ທີ່ປະຕິບັດບໍ່ຖືກຕ້ອງຕາມລະບຽບການ ທີ່ກ່ຽວຂ້ອງກັບວຽກງານຂໍ້ມູນຂ່າວສານສິນເຊື່ອ;

7. ປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງ ເພື່ອຊຸກຍູ້ການເຄື່ອນໄຫວວຽກງານຂໍ້ມູນຂ່າວສານສິນເຊື່ອ;

8. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມກົດໝາຍ ແລະ ລະບຽບການ.

### ມາດຕາ 17 ສິດ ແລະ ໜ້າທີ່ ຂອງກົມຄຸ້ມຄອງສະຖາບັນການເງິນທີ່ບໍ່ແມ່ນທະນາຄານ

ໃນການຄຸ້ມຄອງວຽກງານຂໍ້ມູນຂ່າວສານສິນເຊື່ອ ກົມຄຸ້ມຄອງສະຖາບັນການເງິນທີ່ບໍ່ແມ່ນທະນາຄານ ມີສິດ ແລະ ໜ້າທີ່ ດັ່ງນີ້:

1. ສົ່ງເສີມ ແລະ ຊຸກຍູ້ ສະຖາບັນການເງິນທີ່ບໍ່ແມ່ນທະນາຄານ ໃຫ້ຄວາມຮ່ວມມື ໃນການເຂົ້າເປັນສະມາຊິກ ແລະ ປະຕິບັດພັນທະຂອງສະມາຊິກ;

2. ຕິດຕາມ ກວດກາ ການຈັດຕັ້ງປະຕິບັດວຽກງານຂໍ້ມູນຂ່າວສານສິນເຊື່ອຂອງສະຖາບັນການເງິນທີ່ບໍ່ແມ່ນທະນາຄານ;

3. ປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງ ໃນການໂຄສະນາເຜີຍແຜ່ນິຕິກຳ ກ່ຽວກັບວຽກງານຂໍ້ມູນຂ່າວສານສິນເຊື່ອ ໃຫ້ສະຖາບັນການເງິນທີ່ບໍ່ແມ່ນທະນາຄານ;

4. ປະສານສົມທົບກັບບໍລິສັດຂໍ້ມູນຂ່າວສານສິນເຊື່ອແຫ່ງ ສປປ ລາວ ໃນການເຂົ້າເຖິງ, ແລກປ່ຽນ ແລະ ນຳໃຊ້ ຂໍ້ມູນຂ່າວສານທີ່ຕິດພັນກັບການຄຸ້ມຄອງວຽກງານຂໍ້ມູນຂ່າວສານສິນເຊື່ອ ເຂົ້າໃນການຄຸ້ມຄອງຄວາມໝັ້ນຄົງ ຂອງສະຖາບັນການເງິນທີ່ບໍ່ແມ່ນທະນາຄານ;

5. ແຈ້ງບໍລິສັດຂໍ້ມູນຂ່າວສານສິນເຊື່ອແຫ່ງ ສປປ ລາວ ໃນການຄົ້ນຄວ້ານຳໃຊ້ມາດຕະການຕໍ່ສະຖາບັນການເງິນທີ່ບໍ່ແມ່ນທະນາຄານ ທີ່ປະຕິບັດບໍ່ຖືກຕ້ອງຕາມລະບຽບການ ທີ່ກ່ຽວຂ້ອງກັບວຽກງານຂໍ້ມູນຂ່າວສານສິນເຊື່ອ;

6. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມກົດໝາຍ ແລະ ລະບຽບການ.

**ມາດຕາ 18 ສິດ ແລະ ໜ້າທີ່ ຂອງສາຂາທະນາຄານແຫ່ງ ສປປ ລາວ ປະຈຳພາກ**

ໃນການຄຸ້ມຄອງວຽກງານຂໍ້ມູນຂ່າວສານສິນເຊື່ອ ສາຂາທະນາຄານແຫ່ງ ສປປ ລາວ ປະຈຳພາກ ມີສິດ ແລະ ໜ້າທີ່ ດັ່ງນີ້:

1. ຕິດຕາມ, ກວດກາ ການເຄື່ອນໄຫວ ແລະ ປະຕິບັດວຽກງານຂໍ້ມູນຂ່າວສານສິນເຊື່ອຂອງສະຖາບັນການເງິນ ແລະ ພາກສ່ວນທີ່ກ່ຽວຂ້ອງ ພ້ອມທັງ ຊຸກຍູ້ສະຖາບັນການເງິນ ໃຫ້ຄວາມຮ່ວມມືໃນການເຂົ້າເປັນສະມາຊິກ ແລະ ປະຕິບັດພັນທະຂອງສະມາຊິກ ໃນຂອບເຂດຄວາມຮັບຜິດຊອບຂອງຕົນ;

2. ປະສານງານ ແລະ ສະໜອງຂໍ້ມູນຂ່າວສານທີ່ກ່ຽວຂ້ອງ ໃນຂອບເຂດການຄຸ້ມຄອງຂອງຕົນໃຫ້ບໍລິສັດຂໍ້ມູນຂ່າວສານສິນເຊື່ອແຫ່ງ ສປປ ລາວ ເພື່ອຈັດຕັ້ງປະຕິບັດວຽກງານຂໍ້ມູນຂ່າວສານສິນເຊື່ອຕາມພາລະບົດບາດ ແລະ ລະບຽບການ;

3. ປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງ ໃນການໂຄສະນາເຜີຍແຜ່ນິຕິກຳ ແລະ ຂໍ້ມູນຂ່າວສານກ່ຽວກັບວຽກງານຂໍ້ມູນຂ່າວສານສິນເຊື່ອ ໃຫ້ສະຖາບັນການເງິນ ໃນຂອບເຂດຄວາມຮັບຜິດຊອບຂອງຕົນ;

4. ແລກປ່ຽນ ແລະ ນຳໃຊ້ ຂໍ້ມູນຂ່າວສານສິນເຊື່ອ ເພື່ອນຳໃຊ້ເຂົ້າໃນວຽກງານວິຊາສະເພາະ ໃນຂອບເຂດຄວາມຮັບຜິດຊອບຂອງຕົນ;

5. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມກົດໝາຍ ແລະ ລະບຽບການ.

## ໝວດທີ 6
## ຂໍ້ຫ້າມ ແລະ ມາດຕະການຕໍ່ການລະເມີດວຽກງານຂໍ້ມູນຂ່າວສານສິນເຊື່ອ

**ມາດຕາ 19 ຂໍ້ຫ້າມ**

ຫ້າມສະມາຊິກ ມີພຶດຕິກຳ ດັ່ງນີ້:

1. ເກັບກຳ, ສະໜອງຂໍ້ມູນ ແລະ ນຳໃຊ້ຂໍ້ມູນຂ່າວສານສິນເຊື່ອ ບໍ່ຖືກເປົ້າໝາຍ ແລະ ລະບຽບການ;

2. ລາຍງານຂໍ້ມູນຂ່າວສານສິນເຊື່ອ ບໍ່ຖືກຕ້ອງ, ຄົບຖ້ວນ ຕາມແບບພິມລາຍງານ ແລະ ຕາມກຳນົດເວລາ;

3. ເຂົ້າຄົ້ນຫາ ແລະ ນຳໃຊ້ ຂໍ້ມູນຂ່າວສານສິນເຊື່ອ ໂດຍບໍ່ໄດ້ຮັບການຍິນຍອມຈາກຜູ້ກູ້ຢືມ;

4. ອະນຸມັດສິນເຊື່ອໃຫ້ຜູ້ກູ້ຢືມລາຍໃໝ່, ອະນຸມັດສິນເຊື່ອບ້ວງໃໝ່ໃຫ້ລູກຄ້າລາຍເກົ່າ, ຕໍ່ສັນຍາສິນເຊື່ອ ແລະ ປັບປຸງໂຄງສ້າງໜີ້ ໂດຍບໍ່ເຂົ້າຄົ້ນຫາຂໍ້ມູນຂ່າວສານສິນເຊື່ອຂອງຜູ້ກູ້ຢືມ;

5. ປ່ຽນແປງ ລະຫັດລູກຄ້າ, ລະຫັດສາຂາ, ລະຫັດເງິນກູ້, ລະຫັດຫຼັກຊັບຄ້ຳປະກັນ ໂດຍບໍ່ລາຍງານໃຫ້ບໍລິສັດຂໍ້ມູນຂ່າວສານສິນເຊື່ອແຫ່ງ ສປປ ລາວ ຊາບ;

6. ມອບຊື່ ແລະ ລະຫັດຜ່ານ ທີ່ບໍລິສັດຂໍ້ມູນຂ່າວສານສິນເຊື່ອແຫ່ງ ສປປ ລາວ ອະນຸຍາດນຳໃຊ້ ໃຫ້ບຸກຄົນ ຫຼື ພະນັກງານອື່ນ ທີ່ບໍ່ໄດ້ຮັບອະນຸຍາດນຳໃຊ້;

7. ເປີດເຜີຍ, ແລກປ່ຽນ ຫຼື ສະໜອງ ຂໍ້ມູນຂ່າວສານສິນເຊື່ອ ໃຫ້ບຸກຄົນ ຫຼື ນິຕິບຸກຄົນອື່ນ;

8. ຊຳລະຄ່າບໍລິການ ໃຫ້ບໍລິສັດຂໍ້ມູນຂ່າວສານສິນເຊື່ອແຫ່ງ ສປປ ລາວ ບໍ່ທັນຕາມກຳນົດເວລາ ຫຼື ບໍ່ຊຳລະເລີຍ;

9. ເກັບຄ່າເຂົ້າຄົ້ນຫາຂໍ້ມູນຂ່າວສານສິນເຊື່ອ ນຳຜູ້ກູ້ຢືມ;

10. ປະຕິເສດການຮ່ວມມືໃນການຈັດຕັ້ງປະຕິບັດວຽກງານຂໍ້ມູນຂ່າວສານສິນເຊື່ອ;

11. ປອມແປງຂໍ້ມູນຂ່າວສານສິນເຊື່ອ;

12. ມີພຶດຕິກຳອື່ນ ທີ່ເປັນການລະເມີດກົດໝາຍ.

**ມາດຕາ 20 ມາດຕະການຕໍ່ຜູ້ລະເມີດ**

ສະມາຊິກທີ່ລະເມີດວຽກງານຂໍ້ມູນຂ່າວສານສິນເຊື່ອ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 19 ຂອງຂໍ້ຕົກລົງສະບັບນີ້ ຈະຖືກປະຕິບັດມາດຕະການ ດັ່ງນີ້:

1. ການລະເມີດແຕ່ຂໍ້ 1 ຫາ ຂໍ້ 10 ແລະ 12:

- ການລະເມີດຄັ້ງທຳອິດ ຈະຖືກສຶກສາອົບຮົມ, ກ່າວເຕືອນ ພ້ອມທັງບັນທຶກຢ່າງເປັນລາຍລັກອັກສອນ;
- ການລະເມີດຄັ້ງທີສອງ ຈະຖືກປັບໃໝ 10,000,000 (ສິບລ້ານ) ກີບ ພ້ອມທັງກຳນົດໄລຍະເວລາໃນການແກ້ໄຂ;
- ການລະເມີດຄັ້ງທີສາມ ຈະຖືກປັບໃໝ 1,000,000 (ໜຶ່ງລ້ານ) ກີບ ຕໍ່ວັນ ຈົນກວ່າຈະແກ້ໄຂສຳເລັດ ຕາມກຳນົດໄລຍະເວລາໃນການແກ້ໄຂ;
- ກໍລະນີແກ້ໄຂບໍ່ສຳເລັດ ຫຼື ລະເມີດເປັນອາຈິນ ຈະຖືກໂຈະການເປັນສະມາຊິກ;
- ພາຍຫຼັງຖືກໂຈະການເປັນສະມາຊິກ ແຕ່ຍັງບໍ່ມີການປັບປຸງແກ້ໄຂ ຈະຖືກຖອນໃບອະນຸຍາດການເຂົ້າເປັນສະມາຊິກ.

2. ການລະເມີດຂໍ້ 11 ແລະ 12 ຈະຖືກດຳເນີນຄະດີຕາມກົດໝາຍທີ່ກ່ຽວຂ້ອງ.

## ໝວດທີ 7
## ບົດບັນຍັດສຸດທ້າຍ

**ມາດຕາ 21 ການຈັດຕັ້ງປະຕິບັດ**

ກົມຄຸ້ມຄອງທະນາຄານທຸລະກິດ ເປັນເຈົ້າການຕິດຕາມ ແລະ ກວດກາ ການຈັດຕັ້ງປະຕິບັດຂໍ້ຕົກລົງສະບັບນີ້ໃຫ້ໄດ້ຮັບຜົນດີ.

ກົມຄຸ້ມຄອງສະຖາບັນການເງິນທີ່ບໍ່ແມ່ນທະນາຄານ, ສາຂາທະນາຄານແຫ່ງ ສປປ ລາວ ປະຈຳພາກ, ບໍລິສັດຂໍ້ມູນຂ່າວສານສິນເຊື່ອແຫ່ງ ສປປ ລາວ, ສະມາຊິກ, ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງທີ່ກ່ຽວຂ້ອງ ຈົ່ງຮັບຮູ້ ແລະ ປະຕິບັດຂໍ້ຕົກລົງສະບັບນີ້ຢ່າງເຂັ້ມງວດ.

**ມາດຕາ 22 ຜົນສັກສິດ**

ຂໍ້ຕົກລົງສະບັບນີ້ ມີຜົນສັກສິດ ນັບແຕ່ວັນລົງລາຍເຊັນ ເປັນຕົ້ນໄປ ແລະ ປ່ຽນແທນຂໍ້ຕົກລົງວ່າດ້ວຍການຄຸ້ມຄອງວຽກງານຂໍ້ມູນຂ່າວສານສິນເຊື່ອ ສະບັບເລກທີ 658/ທຫລ, ລົງວັນທີ 02 ກັນຍາ 2022.

ເຖິງແທນ **ຮັກສາການຜູ້ວ່າການທະນາຄານແຫ່ງ ສປປ ລາວ**

**ອາລຸນ ບຸນຍົງ**